# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດທີ 25 ມີຖຸນາ 2017 (06-25-2017)

---

# ເຫັນຄຸນຄ່າຂອງເຂົາເຈົ້າ

ດົນປານໃດແລ້ວທີ່ທ່ານໄດ້ຮັບຮູ້ເມື່ອໃຜຜູ້ນຶ່ງທີ່ມີການປ່ຽນແປງເພື່ອໃຫ້ດີຂຶ້ນ?

**ຈຸດສຳຄັນໃນບົດຮຽນ**: ຖ້າພວກເຮົາເຫັນຄົນອື່ນດັ່ງພຣະຄຣິດຊົງເຫັນ, ພວກເຮົາຈະປະຕິບັດຕໍ່ເຂົາເຈົ້າຕາມຄວາມເຫມາະສົມ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ຈົ່ງຍອມຮັບສິ່ງນີ້: ພວກເຮົາໝົດທຸກຄົນມີຄວາມປລາດໃຈໃນເຄັດລັບແລະພາບປະກອບຂອງນັກຫຼິ້ນກົນ. ຈະແມ່ນການເຮັດໃຫ້ຜູ້ຊ່ວຍອັນຕະທານຫາຍໄປ, ເລື່ອຍຕັດຄົນເປັນສອງຕ່ອນ, ຫຼີ້ນໄພ້ລວງຕາໃນມື: *ລາວເຮັດຢ່າງນັ້ນໄດ້ຢ່າງໃດ?* ຫຼັງຈາກນັ້ນ, ຄວາມປລາດໃຈຂອງພວກເຮົາຈະຫາຍໄປໄວເທົ່າກັບຜູ້ຊ່ວຍຂອງຜູ້ຫຼິ້ນກົນ ຖ້າຫາກພວກເຮົາຄົ້ນພົບເຄັດລັບແລະພາບປະກອບຂອງຜູ້ຫຼິ້ນກົນນັ້ນ. ເທື່ອໜ້າພວກເຮົາເຫັນພາບປະກອບຂອງຜູ້ຫຼິ້ນກົນ ເຮົາຈະເຫັນຢ່າງຈະແຈ້ງຕາມຕົວຈິງຂອງສິ່ງທີ່ເກີດຂຶ້ນນັ້ນ. ມີຫຍັງປ່ຽນແປງບໍ? ບໍ່, ແຕ່ພວກເຮົາສາມາດເຫັນສິ່ງຕ່າງໆຈາກມຸມມອງຂອງຜູ້ຫຼິ້ນກົນ.

ວິທີທີ່ພວກເຮົາເຫັນຄົນອື່ນ ກໍສາມາດເປັນເໝືອນຫຼິ້ນກົນທີ່ເກີດຂຶ້ນກັບພວກເຮົາໄດ້ຄືກັນ. ການຮັບຮູ້ຫຼືຄວາມເຫັນຂອງພວກເຮົາກ່ຽວກັບຄົນໆນຶ່ງສາມາດລຳອຽງ ມີໃຈອະຄະຕິ(ການແບ່ງຊັ້ນວັນນະ)ແລະມີການເຫັນແກ່ຕົວ, ຫຼືແມ້ກະທັ້ງ ມີຄວາມຫວັງວ່າບຸກຄົນນັ້ນຈະມີປໂຍດສຳລັບພວກເຮົາຢ່າງໃດ. ຄວາມບາບຂອງພວກເຮົາສາມາດເຮັດໃຫ້ເຮົາຕາບອດ (ຄືເບິ່ງບໍ່ເຫັນຄວາມຜິດຂອງຕົນເອງ).

ແຕ່ເມື່ອພວກເຮົາເບິ່ງຄົນອື່ນຈາກມຸມມອງຂອງພຣະເຈົ້າພຣະຜູ້ຊົງສ້າງພວກເຮົາ ຕາມພຣະລັກສະນະຂອງພຣະອົງ ຄວາມສັມພັນກໍປ່ຽນໄປໃນທາງດີ. ເຣື່ອງທີ່ເຮົາຮູ້ຈັກດີໃນພຣະຄັມພີ 2 ຊາມູເອນ 11, ກະສັດດາວິດໄດ້ເປັນຕົວຢ່າງອັນໜ້າເສົ້າໃຈແກ່ພວກເຮົາວ່າຈະມີຫຍັງເກີດຂຶ້ນ ເມື່ອພວກເຮົາບໍ່ເຫັນຄົນອື່ນຈາກມຸມມອງຂອງພຣະເຈົ້າ.

**ພຣະຄັມພີກ່າວວ່າແນວໃດ? (ເບິ່ງຕາມຫົວຂໍ້ 1 ແລະ 2)**

### ການສຶກສາພຣະຄັມພີ

**1. <u>2 ຊາມູເອນ 11:1-4</u>**

*1 ໃນປີຕໍ່ມາ ພໍຕົກລະດູແລ້ງເປັນລະດູທີ່ບັນດາເຈົ້າຊີວິດໄດ້ເຄີຍອອກໄປຮົບເສິກ ດາວິດກໍສັ່ງໂຢອາບພ້ອມທັງພວກ*
*ນາຍທະຫານຂອງພຣະອົງແລະກອງທັບອິສຣາເອນອອກໄປ ພວກເຂົາໄດ້ຊະນະຊາວອຳໂມນແລະອ້ອມເມືອງຣັບບາ*
*ໄວ້ ແຕ່ດາວິດໄດ້ຢູ່ໃນນະຄອນເຢຣູຊາເລັມ. 2ໃນຕອນແລງຂອງມື້ນັ້ນດາວິດໄດ້ຕື່ນແຕ່ນອນ ຂຶ້ນໄປເທິງຫລັງຄາພຽງ*
*ຂອງພຣະຣາຊວັງ ພຣະອົງໄດ້ຍ່າງໄປມາເທິງຫລັງຄານັ້ນ ພຣະອົງຈຶ່ງເຫັນຍິງຄົນໜຶ່ງກຳລັງອາບນ້ຳຢູ່ ນາງເປັນຄົນ*
*ງາມຫລາຍ. 3ດັ່ງນັ້ນດາວິດກໍສົ່ງຄົນອອກໄປສືບຖາມເບິ່ງວ່ານາງເປັນໃຜ? ແລ້ວໄດ້ຮູ້ວ່ານາງຊື່ວ່າບັດເຊບາລູກສາວ*
*ຂອງເອລີອາມແລະເປັນເມັຽຂອງອູຣີຢາຊາວຮິດຕີ. 4ດາວິດໄດ້ສົ່ງຄົນໄປນຳເອົານາງມາ. ພວກເຂົາກໍພານາງມາຫາ*

*ພຣະອົງແລ້ວດາວິດກໍ່ສົມສູ່ຢູ່ກັບນາງ. ຫລັງຈາກນັ້ນນາງກໍ່ກັບເມືອເຮືອນ (ໃນລະຫວ່າງນີ້ເປັນເວລາທີ່ນາງເຊົາເປັນລະດູແລະເຮັດພິທີຊໍາຣະຕົນໃຫ້ບໍຣິສຸດແລ້ວ).*

ຄວາມບາບມາໃນທຸກຂນາດແລະຮູບແບບ. ບາງຄວາມບາບກໍເຫັນໄດ້ຢ່າງຊັດແຈ້ງ, ອີກບາບອື່ນກໍ່ຊ່ອນຕົວໄວ້ໃນເງົາຊຶ່ງພວກເຮົາຄິດວ່າບໍ່ມີໃຜຮູ້ນໍາ. ພວກເຮົາມັກຈໍາແນກວ່າຄວາມບາບປະເພດນຶ່ງຮ້າຍແຮງກວ່າອີກປະເພດນຶ່ງ, ແຕ່ບາບທຸກປະເພດມີສອງຢ່າງທີ່ເໝືອນກັນ: 1)ບາບທັງໝົດແມ່ນການກະບົດຕໍ່ພຣະເຈົ້າ, ແລະ 2)ບາບທັງໝົດລິເລີ້ມຈາກຫົວໃຈ.

ພວກເຮົາໄດ້ເຫັນໃນດາວິດເປັນຕົວຢ່າງທີ່ສໍາຄັນຊຶ່ງເລີ້ມຕົ້ນຈາກຫົວໃຈ. ມັນອາດເປັນເຣື່ອງທີ່ເປັນຕາຢາກຫົວ (ຕລົກ), ດ້ວຍເຫດວ່າພຣະຄັມພີອ້າງເຖິງດາວິດໃນຖານະເປັນຄົນທີ່ຖືກນໍ້າພຣະທັຍຂອງພຣະເຈົ້າ (ເບິ່ງ 1 ຊາມູເອນ 13:14; ກິຈການ 13:12). ເຖິງປານນັ້ນດາວິດກໍ່ຍັງເປັນມະນຸດທີ່ມີທັມຊາດແຫ່ງຄວາມບາບ ບາບທີ່ເຫັນຕລອດການປະເຊີນໜ້າກັບດາວິດ ຕໍ່ບັດເຊບາ, ຕໍ່ສາມີຂອງນາງ, ແລະຕໍ່ຫຼາຍໆຄົນ ຊຶ່ງໄດ້ເປັນພະຍານໃນການກະທໍາຂອງຊາຍຄົນນຶ່ງ(ດາວິດ) ຜູ້ທີ່ສົມຄວນຈະເປັນຕົວແທນຂອງຄວາມຊອບທັມຂອງພຣະເຈົ້າ ໃນຖານະເປັນກະສັດຂອງພວກເຂົາເຫຼົ່ານັ້ນ.

| |
|---|
| *ຫລາຍເທື່ອ, ເປັນຫຍັງຈຶ່ງເປັນການຍາກແທ້ສໍາລັບພວກເຮົາທີ່ຈະເຫັນຄຸນຄ່າຂອງຄົນອື່ນ?* |

ຖ້າພວກເຮົາຫາກຂຸດເລິກລົງໄປໃນພຣະຄໍາຕອນນີ້, ພວກເຮົາຈະພົບສາມສະພາບການທີ່ສໍາຄັນໃນການກ້າວເຂົ້າໄປສູ່ຄວາມບາບຂອງດາວິດດັ່ງນີ້:

**1. ດາວິດ<u>ເບິ່ງ</u>ບັດເຊບາ.** ເບິ່ງຈາກຫລັງຄາຂອງຣາຊວັງຂອງພຣະອົງ, ກະສັດດາວິດໄດ້ເບິ່ງເຫັນ “ຍິງທີ່ສວຍງາມຫລາຍ” ກໍາລັງອາບນໍ້າຢູ່. ນັ້ນຍັງບໍ່ເປັນການເສັຽຫາຍຫຍັງເທື່ອ. ມັນເປັນການງ່າຍທີ່ໄດ້ເຫັນສິ່ງທີ່ພວກເຮົາບໍ່ສົມຄວນຈະເບິ່ງ ໂດຍສະເພາະໃນວັດທະນະທັມປັດຈຸບັນ. ບັນຫາມີຢູ່ວ່າ ບໍ່ພຽງແຕ່ດາວິດໄດ້ເຫລືອບຕາເຫັນບັດເຊບາແລ້ວກໍອ່ວາຍສາຍຕາໜີໄປທາງອື່ນພຽງເທົ່ານັ້ນ, ແຕ່ດາວິດໄດ້ຈ້ອງຕາເບິ່ງແລ້ວເບິ່ງອີກ.
**2. ດາວິດ<u>ຖາມ</u>ກ່ຽວເຣື່ອງບັດເຊບາ.** ດາວິດໄດ້ປະເມີນເບິ່ງດົນນານພຽງພໍໃນການເຫັນເບັດຊີບາ "ໂດຍບັງເອີນ" ຈົນເຮັດໃຫ້ຕັນຫາຣາຄະເກີດຂຶ້ນ. ຫລັງຈາກນັ້ນ, ດາວິດຢາກຮູ້ວ່າຜູ້ທີ່ຈະສນອງຕໍ່ຕັນຫາຂອງລາວແມ່ນໃຜ. ໃນຊ່ວງເວລານັ້ນ, ດາວິດບໍ່ໄດ້ຄໍານຶງເຖິງບັດເຊບາວ່າເປັນຍິງທີ່ໄດ້ຖືກຊົງສ້າງຂຶ້ນຕາມພຣະລັກສະນະຂອງພຣະເຈົ້າ. ແຕ່ກົງກັນຂ້າມ, ບັດເຊບາໄດ້ກັບກາຍເປັນວັດຖຸເພື່ອຕອບສນອງຄວາມຕ້ອງການທາງເພດເທົ່ານັ້ນ.
**3. ດາວິດ<u>ສັ່ງ</u>ໃຫ້ນໍາຕົວບັດເຊບາມາ.** ຫລັງຈາກດາວິດໄດ້ຫລຸດຄຸນຄ່າຂອງບັດເຊບາລົງມາເປັນພຽງວັດຖຸແລ້ວ, ລາວໄດ້ໃຊ້ອໍານາດໃນຖານະກະສັດຂອງລາວໄປຍຶດເອົາສິ່ງທີ່ລາວຢາກໄດ້. ພວກເຮົາບໍ່ຮູ້ວ່າບັດເຊບາໄດ້ຕອບສນອງຕໍ່ຄວາມປາຖນາຂອງດາວິດເພາະຢ້ານກົວຣິດອໍານາດຫຼືໂດຍການຮູ້ເທົ່າບໍ່ເຖິງການ ພວກເຮົາຍັງບໍ່ຮູ້ອີກວ່າໃນຈຸດໃດບັດເຊບາໄດ້ເຂົ້າໃຈຄວາມຕັ້ງໃຈຂອງດາວິດ. ສິ່ງທີ່ພວກເຮົາຮູ້ນັ້ນແມ່ນເຈດຕະນາຂອງບັດເຊບາບໍ່ແມ່ນຈຸດສໍາຄັນຂອງເຣື່ອງນີ້ ແຕ່ແມ່ນຄວາມຕັ້ງໃຈຂອງດາວິດແລະການກະທໍາຕ່າງຫາກ ຊຶ່ງສົມຄວນທີ່ຈະໄດ້ຮັບການກວດສອບຂໍ້ເທັດຈິງຈາກພວກເຮົາ.

ການສົນທະນາໃນຊ່ວງນີ້ ແມ່ນກ່ຽວເຣື່ອງການຫລິ້ນຊູ້(ຜິດສິນທັມເຣື່ອງເພດ adultery), ຊຶ່ງເປັນການເຂົ້າໃຈໄດ້. ການຮ່ວມເພດນອກຄວາມສັມພັນການແຕ່ງງານ ເປັນສິ່ງຕ້ອງຫ້າມຢ່າງຊັດແຈ້ງໃນພຣະບັນຍັດ (ເບິ່ງ 1 ອົບພະຍົບ 20:14), ແລະດາວິດຮູ້ສິ່ງນີ້ແນ່ນອນ. ຢູ່ຫຼັງຄວາມປາຖນາຂອງດາວິດທີ່ກະທໍາຜິດສິນທັມເຣືອງເພດກໍມີຄວາມບາບ

ຢ່າງເຈັບປວດເຊັ່ນດຽວກັນ: ດາວິດບໍ່ເຫັນຄຸນຄ່າຂອງບັດເຊບາທີ່ພຣະເຈົ້າຊົງສ້າງຂຶ້ນຕາມພຣະລັກສະນະຂອງພຣະອົງ. ເວົ້າງ່າຍໆ ກໍຄື, ດາວິດເຫັນບັດເຊບາບໍ່ເໝືອນກັບທີ່ພຣະເຈົ້າຊົງເຫັນນາງ.

*ໃນສະຖານທີ່ໃດໃນປັດຈຸບັນ ທີ່ພວກເຮົາເຫັນຄົນອື່ນເໝືອນວັດຖຸສິ່ງຂອງ ຫຼື ໄຮ້ຄຸນຄ່າ?*

**2. 2 ຊາມູເອນ 11:5-9, 14 -17**

*[5]ເມື່ອນາງຮູ້ວ່ານາງຖືພາ ນາງກໍສົ່ງຂ່າວໄປບອກດາວິດ. [6]ສ່ວນດາວິດກໍສົ່ງຂ່າວໄປຫາໂຢອາບວ່າ, "ໃຫ້ທ່ານສົ່ງອູຣີຢາຄົນຮິດຕີມາຫາຂ້ອຍແດ່" ໂຢອາບກໍສົ່ງອູຣີຢາໄປຫາດາວິດ. [7]ເມື່ອອູຣີຢາມາຮອດດາວິດກໍຖາມລາວວ່າໂຢອາບແລະກອງທະຫານຍັງສະບາຍດີຢູ່ບໍແລະການຕໍ່ສູ້ເດເປັນຢ່າງໃດ. [8]ແລ້ວດາວິດກໍບອກອູຣີຢາວ່າ, "ຈົ່ງກັບຄືນເມືອພັກຜ່ອນຈັກຄາວຢູ່ເຮືອນເຈົ້າສາ" ອູຣີຢາກໍຈາກໄປ ດາວິດໄດ້ຈັດຂອງຂວັນນຳສົ່ງໃຫ້ລາວໄປເຖິງເຮືອນ.[9]ແຕ່ວ່າແທນທີ່ອູຣີຢາຈະເມືອເຮືອນ ລາວກັບໄປນອນທີ່ປະຕູກຳແພງພຣະຣາຊວັງນຳທະຫານຂອງເຈົ້າຊີວິດ... [14]ເຊົ້າມື້ໃໝ່ມາ ດາວິດໄດ້ຂຽນຈົດໝາຍສົ່ງນຳອູຣີຢາໄປຫາໂຢອາບ.[15]ພຣະອົງຂຽນວ່າ, "ໃຫ້ເຈົ້າສົ່ງອູຣີຢາໄປແນວໜ້າບ່ອນທີ່ເຂົາສູ້ຮົບກັນຢ່າງໜັກແລ້ວໃຫ້ພວກເຈົ້າເອງຖອຍຄືນຫລັງເພື່ອປ່ອຍໃຫ້ອູຣີຢາຖືກຂ້າຕາຍຢູ່ທີ່ນັ້ນ." [16]ດັ່ງນັ້ນໃນຂະນະທີ່ໂຢອາບກຳລັງອ້ອມເມືອງຢູ່ນັ້ນ ໂຢອາບໄດ້ສົ່ງອູຣີຢາອອກໄປໃນບ່ອນທີ່ລາວຮູ້ວ່າມີພວກສັດຕຣູເຂັ້ມແຂງຫລາຍ. [17]ເມື່ອກອງທັບສັດຕຣູອອກມາຈາກເມືອງກໍໄດ້ພົບກັບກຳລັງຂອງໂຢອາບ ແລະໄດ້ເກີດການສູ້ຮົບກັນຂຶ້ນທັນທີ ພວກນາຍທະຫານຂອງດາວິດບາງຄົນລວມທັງອູຣີຢາກໍຖືກສັດຕຣູສັງຫານ.*

ການຕົກຫລຸມບາບຂອງດາວິດນຳພາໃຫ້ລາວຫ່າງຈາກການຕິດສນິດກັບພຣະເຈົ້າຕໍ່ໄປເລື້ອຍໆ. ແທນທີ່ຈະປະເຊີນໜ້າແລະສາລະພາບຄວາມຜິດຂອງຕົນ, ດາວິດໄດ້ຊອກຊ່ອງທາງປົກປິດຄວາມຜິດຂອງຕົນ ກະທຳບາບຍິ່ງຂຶ້ນ. ດາວິດເບິ່ງຂ້າມຄຸນຄ່າຂອງບັດເຊບາ ແລະໃຊ້ລາວເພື່ອຕອບສນອງຕັນຫາຣາຄະຂອງຕົນ, ແລ້ວຈາກນັ້ນດາວິດໄດ້ໃຊ້ສາມີຂອງບັດເຊບາ, ຢູຣີອາ, ເປັນເຄື່ອງປົກປິດຄວາມບໍ່ສັດຊື່ຂອງລາວ. ກະສັດດາວິດໄດ້ວາງແຜນໃຫ້ສາມີຂອງນາງໄປເຮືອນຂອງຕົນເພື່ອສົມສູ່ກັບນາງ, ໃນຂະນະທີ່ຕົນເອງຢູ່ໃນກຸງຢາຣູຊາເລັມເພື່ອໃຫ້ຄົນທັງຫຼາຍເຂົ້າໃຈວ່າການຖືພາຂອງບັດເຊບານັ້ນແມ່ນມາຈາກການຮ່ວມເພດກັບສາມີຂອງລາວໃນຂະນະທີ່ຢູ່ໃນເຮືອນ. ທັງໆທີ່ເປັນຄຳສັ່ງຂອງກະສັດດາວິດ, ຢູຣີອາເປັນຄົນທີ່ຈົງຮັກພັກດີຕໍ່ກະສັດ. ລາວບໍ່ໄດ້ເປັນທະຫານລາພັກ, ແຕ່ຍັງຢູ່ໃນໜ້າທີ່. ດັ່ງນັ້ນລາວຈຶ່ງຕັ້ງໃຈຢູ່ໃນຄວາມບໍຣິສຸດ ໝາຍຄວາມວ່າລາວຢຸດຢັ້ງການຮ່ວມເພດ (ເບິ່ງ ລລວ 15:18 ແລະ 1 ຊມອ 21:5).

ເວົ້າອີກຢ່າງນຶ່ງ, ຢູຣີອາສະແດງໃຫ້ເຫັນຄວາມຈົງຮັກພັກດີອັນຍິ່ງໃຫຍ່ຕໍ່ກະສັດແລະຕໍ່ອົງພຣະເຈົ້າໂດຍຈະແຈ້ງ.

*ໃນພຣະຄຳຕອນນີ້ແມ່ນຫຍັງສອນພວກເຮົາກ່ຽວກັບການກຳເລີບເຕີບໂຕຂອງຄວາມບາບໃນຊີວິດຂອງເຮົາ?*

ດ້ວຍຄວາມສັດຊື່ແລະຄວາມຕັ້ງໝັ້ນຂອງຢູຣີອາ, ແຜນການທີນຶ່ງຂອງກະສັດດາວິດລົ້ມເຫຼວ. ດັ່ງນັ້ນດາວິດຈຶ່ງໃຊ້ແຜນການທີສອງ: ດາວິດຂຽນຈົດໝາຍຝາກຢູຣີອາໄປໃຫ້ໂຢອາບ. ຢູຣີອາບໍ່ຮູ້ວ່າໃນນັ້ນແມ່ນຄຳສັ່ງປະຫານຊີວິດຂອງຕົນເອງ. ມັນເປັນການຍາກທີ່ຈະເຂົ້າໃຈໃນຂະນະນີ້ທີ່ດາວິດເປັນຄົນໆດຽວກັນກັບຊາຍຜູ້ທີ່ບໍ່ຍອມແຕະຕ້ອງກະສັດຊາອູນທັງໆທີ່ຊາອູນພະຍາຍາມຕາມລ້າສັງຫານລາວ. ດາວິດໄດ້ເປັນຕົວຢ່າງທີ່ໜ້າເສົ້າ ແລະຮ້າຍແຮງຂອງຄວາມບາບ ໃນກໍຣະນີທີ່ພວກເຮົາບໍ່ຍອມສາລະພາບ, ແຕ່ກົງກັນຂ້າມປ່ອຍໃຫ້ຄວາມບາບນັ້ນກຳເລີບໂຕບໂຕ.

ອົງພຣະເຢຊູຊົງຮຽກເອີ້ນໃຫ້ພວກເຮົາມີມາດຕະຖານທີ່ແຕກຕ່າງ. ພວກເຮົາສົມຄວນດໍາລົງຊີວິດດ້ວຍນິສັຍໃຈຄໍຂອງຂ້າຮັບໃຊ້ຊຶ່ງເປັນສັນຍາລັກໃນຊີວິດຂອງອົງພຣະຄຣິດ. ຕາມທີ່ອັຄສາວົກໂປໂລໄດ້ບັນທຶກໄວ້ວ່າ: "ຢ່າເຮັດສິ່ງໃດໃນທາງຊິງດີຫລືຖືດີກັນແຕ່ຈົ່ງຖ່ອມໃຈລົງຖືວ່າຄົນອື່ນດີກວ່າຕົນ. ຢ່າໃຫ້ຜູ້ໃດເຫັນແກ່ປໂຍດຂອງຕົນຝ່າຍດຽວແຕ່ຈົ່ງເຫັນແກ່ປໂຍດຂອງຄົນອື່ນດ້ວຍ. ເຈົ້າທັງຫລາຍຈົ່ງມີນ້ຳໃຈຕໍ່ກັນເໝືອນຢ່າງທີ່ມີໃນພຣະເຢຊູຄຣິດ" (ເບິ່ງ ຟລປ 2:3-5).

ຖ້າຫາກດາວິດດໍາລົງຊີວິດຕາມຫຼັກການຂອງລາວ, ລາວສົມຄວນຈະດໍາເນີນຢູ່ໃນຄວາມຈິງ ແລະຊີວິດຂອງຢູຣີອາຄວນຍົກໄວ້ເໜືອຊີວິດຂອງຕົນ (ເຫັນຜົນປໂຍດຂອງຄົນອື່ນເໜືອຂອງຕົນ). ແນ່ນອນ, ຖ້າຫາກດາວິດດໍາລົງຊີວິດຕາມຫຼັກການຂອງລາວຕັ້ງແຕ່ເລີ້ມແລກ, ລາວສົມຄວນຈະຍົກຄຸນຄ່າຂອງບັດເຊບາໄວ້ເໜືອຕັນຫາຮາຄະຂອງຕົນເອງ. ຖ້າດາວິດເຮັດດັ່ງນັ້ນ ລາວຈະບໍ່ນໍາຕົນເອງເຂົ້າໄປໃນບັນຫາທີ່ຫຍຸ້ງຍາກຕັ້ງແຕ່ເລີ້ມຕົ້ນ.

ພວກເຮົາສາມາດເຮັດໄດ້ດີກວ່ານີ້, ພວກເຮົາສາມາດເບິ່ງເຫັນຄົນອື່ນເໝືອນອົງພຣະຄຣິດຊົງເຫັນ. ພວກເຮົາສາມາດປະຕິບັດຕໍ່ເຂົາເຈົ້າດ້ວຍກຽດສັກສີແລະຄຸນຄ່າຂອງມະນຸດຊຶ່ງອົງພຣະຄຣິດໄດ້ມອບໃຫ້ເຂົາເຈົ້າ.

| |
|---|
| *ແມ່ນຫຍັງເປັນວິທີທາງເພື່ອສແວງຫາຄຸນຄ່າຂອງຄົນອື່ນແລະປະຕິບັດຕໍ່ພວກເຂົາຕາມທາງທີ່ສົມຄວນ?* |

## ນໍາໃຊ້ໃນຊີວິດ

ບາດກ້າວໃດທີ່ທ່ານຈະຕ້ອງເຮັດໃນອາທິດນີ້ ເພື່ອຈະເຫັນແລະປະຕິບັດຕໍ່ຄົນອື່ນເໝືອນດັ່ງພຣະເຈົ້າຊົງເຫັນແລະຊົງກະທໍາ? ຈົ່ງພິຈາຣະນາເບິ່ງຄໍາແນະນໍາດັ່ງຕໍ່ໄປນີ້:

**1. ປະເມີນຜົນ.** ຄົນເຮົາມັກປະຕິບັດຕໍ່ຄົນອື່ນເໝືອນວັດຖຸສິ່ງຂອງ ແທນທີ່ຈະເປັນເໝືອນສິ່ງທີ່ຖືກຊົງສ້າງໄວ້ຕາມພຣະລັກສະນະຂອງພຣະເຈົ້າ. ຖ້າຫາກທ່ານມີແນວໂນ້ມໄດ້ກະທໍາມາແລ້ວ ຈົ່ງສາລະພາບບາບຢ່າງຈິງໃຈແລະປ່ຽນແປງການກະທໍາຂອງທ່ານ.

**2. ສ້ອມແປງ.** ຄວາມສັມພັນທີ່ຂາດສະບັ້ນລົງເປັນອຸປສັກໃຫຍ່ທີ່ສຸດໃນຄຣິສຕະຈັກ. ຈົ່ງສແວງຫາການໄກ່ເກັ່ຍຄືນດີກັນແລະການໃຫ້ອະພັຍຈາກຄົນທີ່ທ່ານໄດ້ຕັດສາຍສັມພັນໄປນັ້ນ.

**3. ຕໍ່ສູ້ຄືນ.** ມີສະຖາບັນຫຼາຍແຫ່ງໄດ້ມີລະບົບຕັດສັກສີແລະຄຸນຄ່າຂອງມະນຸດອອກ: ຕົວຢ່າງການຄ້າມະນຸດ, ຮູບພາບລາມົກ, ຈໍາແນກເຊື້ອຊາດ, ແລະອື່ນໆ... ຈົ່ງຢືນຢັດຕໍ່ສູ້ຢ່າງໃດຢ່າງນຶ່ງໃນສິ່ງເຫຼົ່ານີ້ດ້ວຍຄວາມເປັນທັມ. ວັທນະທັມຂອງພວກເຮົາມີວິທີສ້າງພາບລວງຕາກ່ຽວກັບຄົນບາງປະເພດ: ***ພວກເຂົາບໍ່ມີຄຸນຄ່າ. ພວກເຂົາບໍ່ສໍາຄັນ. ພວກເຂົາເປັນທີ່ໃຊ້ໄດ້*** (ເໝືອນວັດຖຸສິ່ງຂອງ, ໃຊ້ຄັ້ງດຽວແລ້ວໂຍນຖິ້ມ). ຈົ່ງຢ່າເຊື່ອຄວາມຂີ້ຕົວະເຫຼົ່ານີ້. ກົງກັນຂ້າມ,ຈົ່ງພິຈາຣະນາເບິ່ງຄົນທຸກໆປະເພດເໝືອນອົງພຣະເຢຊູຊົງເຫັນ, ແລ້ວປະຕິບັດກັບເຂົາເຈົ້າຕາມທາງທີ່ສົມຄວນ.

**ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ SSK**